ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ                                                                 ເລກທີ: 0577 /ຫອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ: 20 ມີນາ 2019

# ແຈ້ງການ

ເຖິງ : - ປະທານສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສລາວ.

- ທ່ານຜູ້ອຳນວຍການບໍລິສັດນຳເຂົ້າ ແລະ ຂາຍຍົກນ້ຳມັນເຊື້ອໄຟ.

ເລື່ອງ : ການປັບປຸງທຸລະກິດນ້ຳມັນເຊື້ອໄຟ ຕາມມາດຖານເງື່ອນໄຂ ດຳລັດ 331/ນຍ.

- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ກໍລະກົດ 2017.
- ອີງຕາມ ບົດແນະນຳການຈັດຕັ້ງປະຕິບັດເນື້ອໃນບາງມາດຕາຂອງດຳລັດ 331/ນຍ, ເລກທີ 0521/ອຄ.ກຄພນ, ລົງວັນທີ 02 ພຶດສະພາ 2018.

ໂດຍສືບຕໍ່ແຈ້ງການຂອງ ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ, ເລກທີ 2594/ຫອຄ.ກຄພນ, ລົງວັນທີ 18 ຕຸລາ 2018, ທັງນີ້ ເພື່ອເຮັດໃຫ້ການປັບປຸງທຸລະກິດນ້ຳມັນເຊື້ອໄຟ ຖືກຕ້ອງ ແລະ ສອດຄ່ອງ ກັບມາດຖານເງື່ອນໄຂ ທີ່ກຳນົດໄວ້ໃນດຳລັດ 331/ນຍ ທັນຕາມກຳນົດເວລາ. ພາຍຫຼັງ ປະຊຸມປຶກສາຫາລືກັບບັນດາບໍລິສັດນຳເຂົ້າ ແລະ ຂາຍຍົກນ້ຳມັນເຊື້ອໄຟ 2 ຄັ້ງຜ່ານມາ ເຫັນວ່າ ມີຫຼາຍບໍລິສັດໄດ້ສະແດງເຈດຈຳນົງຂອງຕົນເອງຈະສືບຕໍ່ປັບປຸງຕາມມາດຖານເງື່ອນໄຂ ຂອງດຳລັດ. ສະນັ້ນ, ເພື່ອເປັນການຢັ້ງຢືນຄືນອີກເທື່ອໜຶ່ງ ເຖິງຄວາມມຸ່ງໝັ້ນຈະປັບປຸງຕົນເອງ.

**ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ບໍລິສັດນຳເຂົ້າ ແລະ ຂາຍຍົກນ້ຳມັນເຊື້ອໄຟ ທີ່ມີຈຸດປະສົງສືບຕໍ່ປັບປຸງໃຫ້ເປັນບໍລິສັດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ ຄືເກົ່າ ແມ່ນໃຫ້ດັດແກ້ທະບຽນວິສາຫະກິດ (ກໍລະນີທຶນຈົດທະບຽນບໍ່ຮອດ 150 ຕື້ກີບ) ແລະ ຍື່ນເອກະສານ ກ່ຽວກັບ ການຢັ້ງຢືນການປະເມີນຊັບສິນຕ່າງໆ ແລະ ເອກະສານຢັ້ງຢືນການປັບປຸງຕາມແຕ່ລະມາດຖານເງື່ອນໄຂຂອງດຳລັດ ໃຫ້ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ **ຊ້າສຸດບໍ່ໃຫ້ກາຍ ວັນທີ 01 ພຶດສະພາ 2019.**

2. ນັບແຕ່ **ວັນທີ 01 ມີຖຸນາ 2019** ເປັນຕົ້ນໄປ, ການນໍາເຂົ້ານໍ້າມັນເຊື້ອໄຟ ເພື່ອສະໜອງໃຫ້ລູກຄ້າຂອງຕົນ ແມ່ນຈະໄດ້ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ ໃນດໍາລັດ 331/ນຍ, ສະນັ້ນ ບໍລິສັດໃດບໍ່ໄດ້ມາດຖານເງື່ອນໄຂຕາມດໍາລັດ ແມ່ນຈະບໍ່ໄດ້ນໍາເຂົ້ານໍ້າມັນເຊື້ອໄຟ.

3. ປໍ້ານໍ້າມັນເຊື້ອໄຟ ແມ່ນປັບປຸງຕົນເອງ ໃຫ້ສໍາເລັດ ແລະ ສະເໜີດັດແກ້ທະບຽນວິສາຫະກິດ ຕໍ່ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ **ຊ້າສຸດບໍ່ໃຫ້ກາຍ ວັນທີ 01 ພຶດສະພາ 2020.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ຫ້ອງການ

ນ.ບານສະຕິ ເທບພະວົງ

ບ່ອນສົ່ງ:

- ຄະນະນໍາກະຊວງ ອຸດສາຫະກໍາ ແລະ ການຄ້າ ຕາງລາຍງານ.
- ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກົມການນໍາເຂົ້າ ແລະ ສົ່ງອອກ, ກົມການຄ້າພາຍໃນ, ກະຊວງ ອຸດສາຫະກໍາ ແລະ ການຄ້າ ເພື່ອຊາບ.
- ກົມພາສີ, ກົມສ່ວຍສາອາກອນ ກະຊວງການເງິນ ເພື່ອຊາບ.
- ພະແນກ ອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເພື່ອຊາບ.

ເບີໂທ: 020 77777033. ທ. ບຸນທະວົງ
020 99552333 ນ. ຈິນດາວັນ